Haga clic aquí para ver este aviso en español

यो सूचनालाई नेपालीमा हेर्न यहाँ क्लिक गर्नुहोस्

点击此处，查看本通知的简体中文版本

བོད་ཡིག་ཇོག་གསལ་བཟློག་འདི་ཉུ་སྟོག་ཚེད་འདིར་རོར།

ຄລິກບ່ອນນີ້ເພື່ອເບິ່ງແຈ້ງການສະບັບນີ້ເປັນພາສາລາວ

ເລື່ອງ: ຜົນການກວດເຜົ້າລະວັງຂອງພະນັກງານເຂດ CU Boulder

ເຖິງພະນັກງານທີ່ຮັກແພງ,

ຂ້າພະເຈົ້າກຳລັງຕິດຕໍ່ກົມຊັບພະຍາກອນມະນຸດເພື່ອແຈ້ງໃຫ້ທ່ານຊາບວ່າການກວດເຜົ້າລະວັງໂຄວິດ-19 ສຳລັບພະນັກງານທ່ານແມ່ນມີຜົນເປັນບວກ.

ພວກເຮົາກຳລັງຕິດຕາມເພື່ອໃຫ້ຂໍ້ມູນເພີ່ມເຕີມ ແລະ ຂັ້ນຕອນຕໍ່ໄປແກ່ທ່ານ.

ຂັ້ນຕອນທີ 1: ຖ້າທ່ານຍັງບໍ່ໄດ້ກວດເທື່ອ, ໃຫ້ປະກອບ Buff Pass ສຳລັບມື້ນັ້ນ.

ຂັ້ນຕອນທີ 2: ກຳນົດການນັດໝາຍເພື່ອຮັບການກວດບົ່ງມະຕິບໍ່ເສຍຄ່າທີ່ Wardenburg ດ້ວຍການເຂົ້າໄປທີ່ mycuhealth.colorado.edu. ທ່ານຍັງສາມາດໂທໄປທີ່ເບີ 303-492-5101 ແລະ ເລືອກໝາຍເລກ 9. ຫຼັງ ຈາກກວດແລ້ວ, ໃຫ້ກັບເມືອເຮືອນ ແລະ ຢູ່ນອກວິທະຍາເຂດຈົນກວ່າທ່ານຈະໄດ້ຮັບຜົນກວດບົ່ງມະຕິໂຄວິດ-19.

ຖ້າ Wardenburg ບໍ່ສາມາດດຳເນີນການກວດໄດ້ໃນມື້ນີ້, ທ່ານຕ້ອງໄດ້ຮັບການກວດຈາກທ່ານໝໍເບິ່ງແຍງດູແລຂັ້ນຕົ້ນຂອງທ່ານ ຫຼື ສູນກວດອື່ນໆ. ການກວດທີ່ເຮັດຢູ່ນອກ Wardenburg ອາດເຮັດໃຫ້ຜົນກວດຊັກຊ້າ ແລະ ມີຄ່າແນະນຳເພີ່ມເຕີມ.

ຂັ້ນຕອນທີ 3: ປຶກສາຫາລືກ່ຽວກັບທາງເລືອກໃນການລາພັກກັບຫົວໜ້າງານ ຫຼື ພະແນກຊັບພະຍາກອນມະນຸດຂອງທ່ານ.

- ທ່ານອາດມີສິດລາພັກແຕ່ໄດ້ຮັບຄ່າແຮງພາຍໃຕ້ກົດໝາຍປົກປ້ອງສຸຂະພາບຄອບຄົວ ແລະ ສະຖານທີ່ເຮັດວຽກຂອງລັດໂຄໂລຣາໂດ (Colorado Healthy Families and Workplaces Act). ມະຫາວິທະຍາໄລຈະເພີ່ມຍອດການລາປ່ວຍທີ່ມີຢູ່ຂອງພະນັກງານຕາມຄວາມຈຳເປັນເພື່ອໃຫ້ແນ່ໃຈວ່າພະນັກງານສາມາດລາພັກປ່ວຍໄດ້ 80 ຊົ່ວໂມງ (ຄິດຕາມສັດສ່ວນອີງຕາມປີຊັ້ນຂອງເວລາ).
- ຖ້າທ່ານມີການສະສົມການລາພັກຄົບ 80 ຊົ່ວໂມງແລ້ວ, ທ່ານຈະບໍ່ໄດ້ຮັບເວລາເພີ່ມເຕີມໃດໆອີກ.
- ກະລຸນາປະກອບແບບຟອມຂໍລາພັກຍ້ອນໂຄວິດ-19 ແລະ ທີ່ພັກຊົ່ວທີ່ຕິດຄ້າງມາ ແລະ ສົ່ງແບບຟອມທີ່ຕື່ມແລ້ວໄປທີ່ Leave@colorado.edu ເພື່ອຍື່ນຄຳຮ້ອງຂໍລາປ່ວຍ. ແບບຟອມ ແລະ ຂໍ້ມູນເພີ່ມເຕີມກ່ຽວກັບການຂໍລາພັກສາມາດຮັບໄດ້ທີ່ເວັບໄຊ HR.

ຂັ້ນຕອນທີ 4: ທ່ານຈຳເປັນຈະຕ້ອງແຈ້ງຜົນກວດບົ່ງມະຕິໃຫ້ຫົວໜ້າງານ ແລະ/ຫຼື ຜູ້ຕິດຕໍ່ປະຈຳພະແນກຊັບພະຍາກອນມະນຸດຂອງທ່ານ. ກະລຸນາໃຫ້ຂໍ້ມູນນີ້ໂດຍໄວເທົ່າທີ່ຈະໄວໄດ້.

- ຖ້າທ່ານໄດ້ຮັບຜົນກວດບົ່ງມະຕິເປັນບວກ, ທ່ານຈະໄດ້ຮັບຄຳແນະນຳເພີ່ມເຕີມຈາກຄລີນິກສາທາລະນະສຸກຂອງ CU ທີ່ Wardenburg.

- ພະນັກງານຜູ້ທີ່ໄດ້ຮັບຜົນກວດບໍ່ງມະຕິເປັນບວກຈະໄດ້ຮັບການຍົກເວັ້ນຈາກການກວດຜ້າລະອ້ຽ ເປັນເວລາ 90 ວັນ.

- ຖ້າທ່ານໄດ້ຮັບຜົນກວດບໍ່ງມະຕິເປັນລົບ, ໃຫ້ເຮັດວຽກກັບຫົວໜ້າງານຂອງທ່ານເພື່ອປະສານງານກັບໄປ ເຮັດວຽກ.

<u>ຄຳແນະນຳສຳລັບຫົວໜ້າງານ</u>
ຫົວໜ້າງານຕ້ອງຮັບປະກັນວ່າພະນັກງານຜູ້ທີ່ໄດ້ຮັບແຈ້ງຜົນກວດຜ້າລະອ້ຽເປັນບວກກັບເມືອເຮືອນ ແລະ ໃຫ້ ຢູ່ຫ່າງຈາກອິທະຍາເຂດ ຈົນກວ່າພວກເຂົາຈະໄດ້ຮັບຜົນກວດບໍ່ງມະຕິໂຄວິດ-19. ພະນັກງານຈຳເປັນຈະຕ້ອງ ເອົາຜົນກວດບໍ່ງມະຕິໃຫ້ຫົວໜ້າງານ ຫຼື ຜູ້ປະສານງານປະຈຳພະແນກຊັບພະຍາກອນມະນຸດຂອງພວກເຂົາ.

****ຫົວໜ້າງານບໍ່ຄວນດຳເນີນການເພີ່ມເຕີມໃດໆຈົນກວ່າພວກເຂົາໄດ້ລົມກັບທີ່ປຶກສາດ້ານພະນັກງານສຳ ພັນ. ****

ຫົວໜ້າງານຈະໄດ້ຮັບການຕິດຕໍ່ຈາກຝ່າຍພະນັກງານສຳພັນເພື່ອກຳນົດການປະຊຸມດ່ວນກັບຝ່າຍພະນັກງານສຳພັນ ໃນການປຶກສາຫາລືກ່ຽວກັບຂັ້ນຕອນຕໍ່ໄປ.

<u>ຂໍ້ມູນ ແລະ ຊັບພະຍາກອນເພີ່ມເຕີມ</u>

- **ຕິດຕາມການສຳຜັດກັບພະຍາດ:** ພະນັກງານສາທາລະນະສຸກ Health & Wellness ເຂດ Boulder ໃນ CU ຫຼື ພະແນກສາທາລະນະສຸກຂອງຄາວຕີ້ອື່ນໆໃນລັດໂຄໂລຣາໂດອາດຕິດຕໍ່ຫາທ່ານເພື່ອດຳເນີນ ຂະບວນການຕິດຕາມການສຳຜັດກັບພະຍາດໃຫ້ສຳເລັດ.

- **ໂຄງການຊ່ວຍເຫຼືອຄະນະ ແລະ ພະນັກງານ (Faculty and Staff Assistance Program, FSAP):** ໂຄງການຊ່ວຍເຫຼືອຄະນະ ແລະ ພະນັກງານ (Faculty and Staff Assistance Program, FSAP) ອຸທິດຕົນເພື່ອຕອບສະໜອງຄວາມຕ້ອງການດ້ານອາລົມ ແລະ ຈິດໃຈຂອງຊຸມຊົນໃນອິທະຍາເຂດ. ພະ ນັກງານ FSAP ທຸກຄົນໄດ້ຮັບການຝຶກອົບຮົມໃຫ້ເປັນທີ່ປຶກສາທົ່ວໄປ ແລະ ພ້ອມທີ່ຈະຈັດການກັບບັນ ຫາສ່ວນຕົວ ແລະ ບັນຫາກ່ຽວກັບວຽກງານທີ່ຫຼາກຫຼາຍ. ຖ້າທ່ານຕ້ອງການກຳນົດການນັດໝາຍ, ທ່ານສາ ມາດເຂົ້າເບິ່ງ ເວັບໄຊ FSAP ຫຼື ຕິດຕໍ່ພວກເຂົາໄດ້ທີ່ເບີ 303-492-3020.

- **ການຮັກສາຄວາມລັບ:** ໃນໄລຍະການແຜ່ລະບາດທົ່ວໂລກນີ້, ອາດຈຳເປັນຕ້ອງໄດ້ແບ່ງປັນຂໍ້ມູນເພື່ອປົກ ປ້ອງພະນັກງານຂອງພວກເຮົາ. ຖ້າມີລາຍງານຜົນກວດເປັນບວກ, ພະແນກ ແລະ ຊັບພະຍາກອນທັງ ໝົດຈະເຮັດທຸກວິທີທາງທີ່ເປັນໄປໄດ້ເພື່ອປົກປ້ອງຕົວຕົນຂອງພະນັກງານ.

ຂໍຂອບໃຈສຳລັບການດູແລຕົນເອງ ແລະ ຊຸມຊົນຂອງພວກເຮົາ – ການປະຕິບັດຂອງແຕ່ລະຄົນ ແລະ ທຸກໆຄົນມີ ຄວາມສຳຄັນໃນການຮັກສາພວກເຮົາທຸກຄົນໃຫ້ປອດໄພ!

ໂຊກດີ,
ຜູ້ປະສານງານ
ຝ່າຍພະນັກງານສຳພັນ
ພະແນກຊັບພະຍາກອນມະນຸດ
ເຂດ Boulder ໃນມະຫາວິທະຍາໄລ Colorado